ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 94 /ລບ

ນະຄອນຫຼວງວຽງຈັນ, ວັນທີ 08.03.2017

# ດຳລັດ
## ວ່າດ້ວຍກອງທຶນປົກປັກຮັກສາສິ່ງແວດລ້ອມ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015;
- ອີງຕາມກົດໝາຍວ່າດ້ວຍຊັບສິນຂອງລັດ ສະບັບເລກທີ 14/ສພຊ, ລົງວັນທີ 5 ກໍລະກົດ 2012;
- ອີງຕາມໜັງສືສະເໜີຂອງລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 0560/ກຊສ, ລົງວັນທີ 10 ກຸມພາ 2017.

## ລັດຖະບານ ອອກດຳລັດ
### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບ ການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການຕິດຕາມກວດກາ ກອງທຶນປົກປັກຮັກສາສິ່ງແວດລ້ອມ ເພື່ອລະດົມຂົນຂວາຍທຶນ ຈາກພາຍໃນ ແລະ ຕ່າງປະເທດ ແນໃສ່ສະສົມທຶນ ຕອບສະໜອງໃຫ້ແກ່ວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ແບບຍືນຍົງ ປະກອບສ່ວນເຮັດໃຫ້ແຜນພັດທະນາເສດຖະກິດ-ສັງຄົມ ບັນລຸຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ກອງທຶນປົກປັກຮັກສາສິ່ງແວດລ້ອມ**

ກອງທຶນປົກປັກຮັກສາສິ່ງແວດລ້ອມ ຂຽນຫຍໍ້ເປັນພາສາລາວ ວ່າ "ກປສ" ເປັນພາສາອັງກິດວ່າ "Environment Protection Fund - EPF" ແມ່ນກອງທຶນຂອງລັດ ທີ່ສ້າງຂຶ້ນ ເພື່ອລະດົມ ແລະ ຂົນຂວາຍທຶນ ຈາກພາຍໃນ ແລະ ຕ່າງປະເທດ ດ້ວຍຮູບການຕ່າງໆ ແນໃສ່ສະສົມທຶນ ເພື່ອຕອບສະໜອງເຂົ້າໃນວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ໃຫ້ມີປະສິດທິຜົນ ແລະ ຍືນຍົງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ຢູ່ໃນດຳລັດສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ລະບຽບການຄຸ້ມຄອງ** ໝາຍເຖິງ ລະບຽບການຄຸ້ມຄອງ-ບໍລິຫານ ຂອງຫ້ອງການ ກປສ ທີ່ຮັບຮອງໂດຍສະພາບໍລິຫານ ແລະ ມີການດັດແກ້ເປັນແຕ່ລະໄລຍະ;

2. **ຄູ່ມືບໍລິຫານ** ໝາຍເຖິງ ຄູ່ມືແນະນຳ ດ້ານວິຊາການ ກ່ຽວກັບການຈັດຕັ້ງປະຕິບັດໂຄງການ, ລວມມີ ຂັ້ນຕອນ ການສະເໜີ ແລະ ການທົບທວນ ບົດສະເໜີໂຄງການ; ຂັ້ນຕອນການຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະ ການປະເມີນຜົນໂຄງການ; ການຄຸ້ມຄອງດ້ານການເງິນ ແລະ ການຈັດຊື້-ຈັດຈ້າງ ຂອງຫ້ອງການ ກປສ ແລະ ຂອງທຸກໂຄງການທີ່ໄດ້ຮັບທຶນຈາກ ກປສ;

3. **ຜູ້ມີເງື່ອນໄຂຂໍທຶນ** ໝາຍເຖິງ ອົງການຈັດຕັ້ງພາກລັດ, ພາກທຸລະກິດ ແລະ ພາກເອກະຊົນ ຢູ່ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ຫຼື ບ້ານ, ຫົວໜ່ວຍທຸລະກິດ ຫຼື ອົງການຈັດຕັ້ງສັງຄົມ ທີ່ມີເງື່ອນໄຂໃນການຂໍທຶນຕາມທີ່ໄດ້ກຳນົດໄວ້ໃນຄູ່ມືບໍລິຫານ;

4. **ຜູ້ໄດ້ຮັບໂຄງການ** ໝາຍເຖິງ ຜູ້ມີເງື່ອນໄຂຂໍທຶນ ທີ່ໄດ້ຮັບການອະນຸມັດທຶນ ຈາກ ກປສ ແລະ ໄດ້ເຊັນສັນຍາ ຊ່ວຍເຫຼືອລ້າ ຫຼື ກູ້ຢືມ ຈາກ ກປສ;

5. **ຮ່ອງທຶນ** ໝາຍເຖິງ ທຶນສະເພາະ ທີ່ ກປສ ຈັດສັນສຳລັບໂຄງການທີ່ຕິດພັນກັບການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ;

6. **ການໃຫ້ທຶນຊ່ວຍເຫຼືອລ້າ** ໝາຍເຖິງ ການສະໜອງທຶນຊ່ວຍເຫຼືອລ້າ ໃຫ້ບັນດາໂຄງການທີ່ມີເງື່ອນໄຂຂໍທຶນໂດຍບໍ່ຈຳເປັນຕ້ອງທົດແທນທຶນຄືນ;

7. **ຊັບສິນ ຂອງ ກປສ** ໝາຍເຖິງ ຊັບສິນຂອງລັດທີ່ ກປສ ຄຸ້ມຄອງ ແລະ ນຳໃຊ້.

**ມາດຕາ 4 ຫຼັກການຄຸ້ມຄອງ ແລະ ນຳໃຊ້ທຶນ ຂອງ ກປສ**

ການຄຸ້ມຄອງ ແລະ ນຳໃຊ້ທຶນ ຂອງ ກປສ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ລວມສູນ ແລະ ເປັນເອກະພາບ ຕາມລະບົບງົບປະມານແຫ່ງລັດ;
2. ຖືກຕ້ອງຕາມເປົ້າໝາຍ, ປະຢັດ ແລະ ມີປະສິດທິຜົນ;
3. ທຸກລາຍຮັບ ແລະ ລາຍຈ່າຍ ຕ້ອງຜ່ານລະບົບບັນຊີຂອງຄັງເງິນແຫ່ງຊາດ, ລົງບັນຊີ ຕາມຫຼັກການ ແລະ ລະບຽບການພື້ນຖານການບັນຊີແຫ່ງລັດ;
4. ໃຫ້ມີຄວາມຄ່ອງຕົວ, ວ່ອງໄວ, ຍຸຕິທຳ ແລະ ໂປ່ງໃສ, ຮັບປະກັນລາຍຈ່າຍຕາມແຜນການປະຈຳແຕ່ລະສົກປີ;
5. ມີການກວດກາ ແລະ ກວດສອບ ເປັນປົກກະຕິ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 2

## ແຫຼ່ງລາຍຮັບ ແລະ ການນຳໃຊ້ທຶນ ຂອງ ກປສ

**ມາດຕາ 5 ແຫຼ່ງລາຍຮັບ ຂອງ ກປສ**

ແຫຼ່ງລາຍຮັບຂອງ ກປສ ໄດ້ມາຈາກ:

1. ງົບປະມານຂອງລັດ;
2. ການປະກອບສ່ວນ ຕາມພັນທະໃນການປົກປັກຮັກສາສິ່ງແວດລ້ອມ ຕາມສັນຍາສຳປະທານ ຂອງໂຄງການລົງທຶນຕ່າງໆ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍໄຟຟ້າ, ກົດໝາຍວ່າດ້ວຍແຮ່ທາດ ແລະ ກົດໝາຍ ອື່ນທີ່ກ່ຽວຂ້ອງ;